# ການສົ່ງເສີມກະສິກຳ ແມ່ນ ວຽກຂອງປວງຊົນ!

"ເຫດຜົນທີ່ ລາວຕ້ອງການຮູບແບບການສົ່ງເສີມກະສິກຳທີ່ຮອບດ້ານ"



# ການສົ່ງເສີມກະສິກຳ ແມ່ນ ວຽກຂອງປວງຊົນ!

## "ເຫດຜົນທີ່ ລາວຕ້ອງການຮູບແບບການສົ່ງເສີມກະສິກຳທີ່ຮອບດ້ານ"



## 1. ເນື້ອໃນຕົ້ນຕໍຂອງເອກະສານສະບັບນີ້?

ປະຈຸບັນ ການກະສິກຳ ໃນລາວກຳລັງມີການປ່ຽນແປງ,ຊາວກະສິກອນສ່ວນໃຫຍ່ປ່ຽນແບບແຜນການຜະລິດຈາກພໍກຸ້ມກິນໄປສູ່ການຜະລິດໃຫ້ເປັນສິນຄ້າ ແລະ ຕອບສະໜອງຕາມຄວາມຕ້ອງການຕະລາດ.

ສະໜອງຕອບຕາມນະໂຍບາຍການພັດທະນາປະເທດ ໄປຕາມທິດສັງຄົມນິຍົມຂອງລັດຖະບານກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກແຮງສະໜັບສະໜູນຈັດຕັ້ງຊີ້ນຳການຜະລິດກະສິກຳໃຫ້ເປັນສິນຄ້າຢ່າງສູງພໍສົມຄວນ. ຢາກກ້າວສູ່ການພັດທະນາຕາມທິດສັງຄົມນິຍົມ ແມ່ນການເຮັດໃຫ້ທຸກພາກສ່ວນຫັນການຜະລິດໃຫ້ການເປັນສິນຄ້າ. ສປປລາວ ສາມາດຖອດຖອນບົດຮຽນໄດ້ຈາກຄວາມຜິດພາດຈາກຫຼາຍປະເທດຊຶ່ງໃນໄລຍະຂ້າມຜ່ານສູ່ການຜະລິດເປັນສິນຄ້າທີ່ປະໂຫຍດເກີດກັບພຽງຜູ້ຜະລິດຟາມໃຫຍ່ໆ,ສ່ວນຊາວກະສິກອນລາຍຍ່ອຍຍັງຕົກຢູ່ໃນພາວະລຳບາກເໝືອນເດີມ. ເພາະສະນັ້ນຈຶ່ງເຫັນໄດ້ວ່າການພັດທະນາຄົນ ຫຼື ກຳລັງການຜະລິດ ແມ່ນປຽບໄດ້ຄືກັບຫົວຈັກທີ່ຈະນຳໄປສູ່ການເຕີບໂຕທາງເສດຖະກິດໄດ້ ແລະ ແຜນພັດທະນາເສດຖະກິດຄັ້ງທີ VII ຂອງປະເທດກໍ່ແມ່ນເນັ້ນໃສ່ການສ້າງຄວາມກົມກຽວ ລ່ອງຊ່ອງກັນລະຫວ່າງເສດຖະກິດ, ສັງຄົມ ແລະ ການຮັກສາສິ່ງແວດລ້ອມ. ການທີ່ວຽກສົ່ງເສີມກະສິກຳມີບົດບາດທີ່ເປັນຂໍກຸນແຈໃນຂະບວນການພັດທະນາຊັບພະຍາ

ກອນມະນຸດ ນັ້ນກໍ່ຢູ່ທີ່ຊາວກະສິກອນຜູ້ທີ່ປ່ຽນແບບແຜນການຜະລິດ ໄປສູ່ການຜະລິດເປັນສິນຄ້າມີຄວາມຈຳເປັນຕ້ອງຮຽນຮູ້ຫຼາຍຢ່າງດ້ານແນວຄວາມຄິດ ແລະ ເຕັກໂນໂລຢີຮວມທັງວິທີການຈັດຕັ້ງຄຸ້ມຄອງການຜະລິດຂອງເຂົາເຈົ້າ. ສະນັ້ນບົດບາດຂອງນັກສົ່ງເສີມຕ້ອງເປັນການເອື້ອອຳນວຍການຮຽນຮູ້ເຫຼົ່ານັ້ນໃນທຸກໆພາກສ່ວນທີ່ຕ້ອງໄດ້ຮັບປະໂຫຍດຈາກການຜະລິດ. ຢາກເຮັດໄດ້ແນວນັ້ນ, ສປປລາວຕ້ອງມີຮູບແບບການສົ່ງເສີມທີ່ຮອບດ້ານ. ເອກະສານສະບັບນີ້ຈະໄດ້ໃຫ້ຄວາມກະຈ່າງແຈ້ງໃນແນວຄວາມຄິດ, ພຶດຕິກຳທີ່ສາມາດຊ່ວຍນັກສົ່ງເສີມຂອງລາວໃນການຈັດຕັ້ງປະຕິບັດພາລະກິດການສົ່ງເສີມດັ່ງກ່າວໄດ້.

## 2. ຮູບແບບການສົ່ງເສີມທີ່ຮອບດ້ານມີຄວາມໝາຍຢ່າງໃດ?

ໝາຍວ່າການເຮັດໃຫ້ເປັນຂອງປວງຊົນ-ຊາວກະສິກອນເຂົ້າຮ່ວມຢ່າງໜັກແໜ້ນ ແລະ ກໍ່ເປັນການປ່ຽນແປງພຶດຕິກຳຜ່ານມາຢ່າງຮອບດ້ານໃນ ສປປ ລາວ ກໍ່ຄືໃນປະເທດອື່ນໆຜ່ານມາ ການສົ່ງເສີມມຸ້ງເນັ້ນໃສ່ການຄັດເລືອກຊາວກະສິກອນ: ໂດຍສະເພາະຜູ້ທີ່ມີເງື່ອນໄຂ ແລະ ທ່າແຮງທີ່ດີກ່ວາ, ຫ້າວຫັນກ່ວາໝູ່ ແລະ ມັກເປັນຄອບຄົວທີ່ມີເນື້ອທີ່ການຜະລິດທີ່ເຂົ້າຫາໄດ້ງ່າຍ, ຂະໜາດພໍເໝາະ ແລະ ມີທັງແຮງງານ ແລະ ທຶນສ່ວນນຶ່ງແລ້ວ. ແນ່ນອນມັນເປັນເລື່ອງງ່າຍທີ່ເຮັດວຽກກັບຜູ້ມີລະດັບການສຶກສາແດ່, ແຕ່ມັນເປັນການປະຕິເສດຕໍ່ອີກພວກນຶ່ງໃນໝູ່ຊາວກະສິກອນທີ່ດຳລົງຊີວິດໃນເຂດຫ່າງໄກສອກຫຼີກ, ແມ່ຍິງທີ່ຂາດການສຶກສາ, ຂາດທັງເງິນ ແລະ ເນື້ອທີ່ທຳການຜະລິດ, ຊຶ່ງທັງໝົດພວກເຫຼົ່ານັ້ນກໍ່ຄວນມີໂອກາດໄດ້ເຂົ້າຮ່ວມໃນວຽກສົ່ງເສີມ ແລະ ການພັດທະນາເສດຖະກິດລວມຂອງປະເທດເໝືອນກັນ. ມີຫຼາຍເຫດຜົນທີ່ພວກເຮົາຕ້ອງໄດ້ປະຕິບັດກັບຊາວກະສິກອນຜູ້ທີ່ດ້ອຍໂອກາດຜ່ານມານັ້ນ ໂດຍຈະໄດ້ໃຫ້ການອະທິບາຍຕໍ່ໄປນີ້. ສັງຮວມແລ້ວປະສົບການຜ່ານມາ ແລະ ນະໂຍບາຍໃໝ່ຊີ້ໃຫ້ເຫັນວ່າການບໍລິການສົ່ງເສີມຕ້ອງດຳເນີນໂດຍປວງຊົນໃຫ້ເປັນຮູບແບບທີ່ຮອບດ້ານ

## 3. ບົດບາດຂອງກຸ່ມໃນຮູບແບບການສົ່ງເສີມທີ່ຮອບດ້ານ

ການເຮັດວຽກກັບກຸ່ມ ແມ່ນ ມີປະສິດຕິຜົນກ່ວາການເຮັດກັບລາຍບຸກຄົນ.,ທັງນີ້ກໍ່ເພາະວ່ານັກສົ່ງເສີມສາມາດພົບ ແລະ ສະໜອງຕອບຕໍ່ຄວາມມຸ້ງຫວັງຂອງຫຼາຍຄົນໃນເວລາດຽວ ແລະ ຮູບແບບການສົ່ງເສີມດັ່ງກ່າວສາມາດເກີດການປະຕິບັດໄດ້ກໍ່ຕໍ່ເມື່ອເກີດການລວມກຸ່ມ. ແນ່ນອນມັນບໍ່ມີມາດຖານຕາຍຕົວໃນການລວມກຸ່ມໃນວຽກສົ່ງເສີມ ແລະ ຜ່ານມາກໍ່ໄດ້ມີກຸ່ມເກີດຂຶ້ນແລ້ວເຊັ່ນ ກຸ່ມຜູ້ນຳໃຊ້ນ້ຳ , ກຸ່ມອະນຸລັກ/ຄຸ້ມຄອງປ່າໄມ້,ກຸ່ມອອມຊັບ... ຊຶ່ງນັກສົ່ງເສີມສາມາດປະຕິບັດວຽກນຳໄດ້ຖ້າເຂົາເຈົ້າຫາກມີຄວາມຕ້ອງການດ້ານເຕັກນິກການຜະລິດ ແລະ ສາມາດຈັດຕັ້ງກຸ່ມຮຽນຮູ້ໃໝ່ຂຶ້ນອີກໄດ້ຕາມສິ່ງທີ່ເຂົາເຈົ້າສົນໃຈຢາກຮຽນຮູ້ (ການຍົກສະມັດຕະພາບເຂົ້າ, ການເກັບຊີ້ໝູ...) ແລະ ຍັງສາມາດຕັ້ງກຸ່ມສະເພາະເພດຍິງດ້ານການລ້ຽງໄກ່, ກຸ່ມຄຸ້ມຄອງປ່າໄມ້ກັບພວກທີ່ບໍ່ມີດິນນາຕ່າງໆ...



ປະສົບການໃນຫຼາຍປະເທດບົ່ງບອກຈະແຈ້ງວ່າກຸ່ມທີ່ມີຄວາມເຂັ້ມແຂງ, ໝັ້ນຄົງແມ່ນເກີດຈາກການລວມຕົວກັນເອງຂອງສາມະຊິກທີ່ມີປະໂຫຍດແລະຄວາມສົນໃຈທີ່ຄ້າຍຄືກັນຫາກບໍ່ແມ່ນ ການເຂົ້າຮ່ວມເປັນສາມະຊິກຍ້ອນໃຜຜູ້ນຶ່ງຜັກດັນໃຫ້ເຂົ້າຮ່ວມເປັນສາມະຊິກ. ນັກສົ່ງເສີມມີໜ້າທີ່ກະຕຸກຊຸກຍູ້ໃຫ້ການແນະນຳກຸ່ມແຕ່ຕ້ອງໃຫ້ສາມະຊິກກຸ່ມເປັນຜູ້ຕັດສິນໃຈເອົາເອງ. ອຳນາດການປົກຄອງບ້ານເຮັດບົດບາດຈັດຕັ້ງ/ຮັບຮອງກຸ່ມໃໝ່ໆຖ້າຊາວບ້ານມີຄວາມຕ້ອງການຫາກບໍ່ ແມ່ນເພາະວ່າພະນັກງານເມືອງມີແຜນໃຫ້ປະຕິບັດໄວ້ກ່ອນແລ້ວ. ກຸ່ມຈະມີປະສິດຕິພາບກໍ່ຕໍ່ເມື່ອສາມະຊິກມີຄວາມຕ້ອງການອັນແຮງກ້າໃນການເຕົ້າໂຮມ ແລະ ປັບປຸງສິ່ງໃດນຶ່ງ ແລະ ມັນຈະເກີດຂື້ນໄດ້ເວລາໃດທີ່ສາມະຊິກມີຄວາມສະມັກໃຈ, ເຫັນໄດ້ພັນທະ ແລະ ມີສ່ວນຮ່ວມໃນການວາງແຜນຕ່າງໆດ້ວຍກັນ.

## 4. ຜູ້ທີ່ຕ້ອງໄດ້ຖືກກະຕຸກຊຸກຍູ້ເຂົ້າຮ່ວມໃນກຸ່ມ?

ແມ່ນຢູ່ວ່າການສົ່ງເສີມແມ່ນຂອງປວງຊົນແຕ່ຜູ້ທີ່ຕ້ອງໄດ້ເອົາໃຈໃສ່ຊຸກຍູ້ແມ່ນບັນດາຊາວກະສິກອນທີ່ດ້ອຍໂອກາດກ່ວາໝູ່ຜ່ານມາ ໂດຍສະເພາະເພດຍິງແລະຄອບຄົວທີ່ທຸກຍາກນະໂຍບາຍລັດຖະບານໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນແມ່ນຈະແຈ້ງ. ໃນແຜນຍຸດທະສາດລຶດຜ່ອນຄວາມທຸກຍາກແຫ່ງຊາດ (NGPES,2004) ໄດ້ລະບຸແຈ້ງວ່າກະຊວງກະສິກຳ ແລະ ປ່າໄມ້ຕ້ອງໄດ້ສ້າງລະບົບການສົ່ງເສີມກະສິກຳເພື່ອກະຈ່າຍເຕັກໂນໂລຢີ ການຜະລິດໃຫ້ເຖິງຊາວກະສິກອນຜູ້ທຸກຍາກຢ່າງໜັກແໜ້ນ". ອີກຢ່າງນຶ່ງໃນ NGPES ກໍ່ໄດ້ ລະບຸວ່າໃຫ້ເພດຍິງໄດ້ມີໂອກາດເຂົ້າສູ່ການປັບປຸງແບບແຜນ

ການຜະລິດຂອງຕົນໃນພຶດຕິກຳຕົວຈິງ". ເວົ້າອີກຢ່າງນີ້ງການສົ່ງເສີມບໍ່ແມ່ນພຽງແຕ່ສຳລັບເພດຊາຍ ຫາກຍັງຕ້ອງໃຫ້ຄວາມສຳຄັນພິເສດຕໍ່ກັບການເຂົ້າເຖິງໄດ້ຂອງເພດຍິງ. ແນວຄວາມຄິດໃນການເພີ່ມຄວາມເຕີບໂຕທາງ ເສດຖະກິດໂດຍສັງຄົມມີຄວາມສະເໝີພາບ/ຍຸດຕິທຳນັ້ນມັນເປັນຈຸດສູນກາງແຫ່ງເນື້ອໃນຂອງ NGPES. ສະເພາະໃນຂະແໜງການກະສິກຳແລ້ວມັນກ່ຽວຂ້ອງກັບການເພີ່ມຜົນຜະລິດ ແລະ ລຶດຜ່ອນຄວາມຂາດເຂີນຊື່ງບໍ່ແມ່ນສອງຮູບແບບທີ່ແຍກກັນຫາກແມ່ນສອງຜົນການປະຕິບັດທີ່ຕ້ອງໄປຄວບຄູ່ກັນໃນຮູບແບບການສົ່ງເສີມອັນດຽວນັ້ນ. ຢາກເຮັດໄດ້ກໍ່ມີພຽງແຕ່ການນຳໃຊ້ຮູບແບບການສົ່ງເສີມທີ່ຍຶດໝັ້ນປວງຊົນເຂົ້າຮ່ວມໂດຍສະເພາະ ຊາວກະສິກອນທີ່ທຸກຈົນ ແລະຜູ້ຍິງທີ່ດ້ອຍໂອກາດໄດ້ມີສ່ວນຮ່ວມເຂົ້າໃນການສ້າງ ຄວາມເຕີບໂຕທາງເສດຖະກິດຂອງຊາດ.

## 5. ຈະເຮັດໃຫ້ຊາວກະສິກອນທີ່ທຸກຍາກປະກອບສ່ວນຢ່າງໃດ?

ມີຫຼາຍໆພຶດຕິກຳຕົວຈິງແລ້ວທີ່ນຳເອົາຄອບຄົວທຸກຍາກເຂົ້າຮ່ວມກິດຈະກຳສົ່ງເສີມ:

- <u>ຄົນທຸກ ແມ່ນ ກຸ່ມຜູ້ຜະລິດ:</u>

ການລຶບລ້າງຄວາມທຸກຍາກບໍ່ແມ່ນການນຳເອົາແຜ່ນພັບ/ຂໍ້ອະທິບາຍໃຫ້ແກ້ຜູ້ທີ່ທຸກຍາກ ແຕ່ມັນມີຄວາມໝາຍຢູ່ທີ່ການສັນຫາ/ສ້າງໂອກາດໃຫ້ເຂົາເຈົ້າໄດ້ມີການຜະລິດທີ່ດີຂື້ນ. ມີຫຼາຍກໍລະນີສຶກສາຈາກສາກົນສະແດງໃຫ້ເຫັນວ່າຊາວກະສິກອນທີ່ທຸກຍາກ ສາມາດປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນການສ້າງຜົນເຕີບໂຕດ້ານເສດຖະກິດແຫ່ງຊາດ

- <u>ຄົນທຸກ ແມ່ນກຸ່ມຜູ້ບໍລິໂພກ:</u>

ເວລາໃດທີ່ຊາວກະສິກອນມີແບບແຜນ/ຜົນການຜະລິດດີຂື້ນ, ແນ່ນອນການໃຊ້ຈ່າຍໃສ່ສິນຄ້າ ແລະການບໍລິການກໍ່ຍ່ອມສູງຂື້ນຕາມໄປດ້ວຍ. ເວລານີ້ບົດບາດການສົ່ງເສີມກໍ່ກາຍເປັນຕົວຍູ້ເສດຖະກິດຂື້ນໂດຍສະເພາະຕໍ່ກັບກຸ່ມຄອບຄົວທີ່ຍັງເຮັດພໍກຸ້ມກິນຢູ່ນັ້ນຕ້ອງໄດ້ຮີບຮ້ອນແກ້ໄຂ ຍົກປະສິດຕິພາບການຜະລິດຕົນຂື້ນ

- <u>ຄວາມຍືນຍົງຂອງສະພາບແວດລ້ອມ:</u>

ຄອບຄົວທີ່ທຸກຍາກໃນເຂດພູດອຍ ມັກອາໃສແຕ່ຂະໜາດຂອງເນື້ອທີ່ຈຶ່ງມີຜົນຜະລິດຈຸນເຈືອຄອບຄົວໄດ້, ດັ່ງນັ້ນມັກເກີດມີດິນເຊື່ອມຄຸນ, ເຊາະເຈື່ອນ, ນ້ຳປ່າໄຫຼຫຼາກ...,ສະນັ້ນການສອນໃຫ້ເຂົາເຈົ້າໃຫ້ຮູ້ຈັກວິທີການຜະລິດທີ່ຍືນຍົງມີອາຊີບຄົງທີ່ກໍ່ເປັນຜົນປະໂຫຍດລວມຕໍ່ຊຸມຊົນ ແລະ ສັງຄົມໃນຍາວນານ.

- <u>ສະເຖັຍລະພາບຂອງສັງຄົມ:</u>

ທົ່ວທັງໂລກຮັບຮູ້ວ່າສັນຕິພາບ ແລະ ຄວາມສະຫງົບແມ່ນສາຍສຳພັນສຳຄັນກັບບັນຫາຄວາມທຸກຍາກ. ການແຍກປ່ຽວກຸ່ມຄົນໃດນື່ງອອກຈາກການັພດທະນາ ຫຼື ເກີດຄວາມແຕກໂຕນກັນລະວ່າງ

ກຸ່ມຜູ້ຮັ່ງ ແລະ ຜູ້ທຸກແນ່ນອນຈະກໍ່ໃຫ້ເກີດຄວາມກົດດັນ, ທ່ວງດຶງການເຕີບໂຕທາງເສດຖະກິດຂອງຊາດ.

## 6. ເປັນຫຍັງຈຶ່ງຕ້ອງໃຫ້ເພດຍິງມີສ່ວນຮ່ວມໃນກຸ່ມ?

ມີຄໍາຕອບງ່າຍໆກໍ່ແມ່ນ ເນື່ອງຈາກວ່າເພດຍິງກໍ່ແມ່ນຊາວກະສິກອນ. ຕາມສະຖິຕິແຫ່ງຊາດລະບຸວ່າຊາວກະສິກອນທີ່ເປັນເພດຍິງມີຫຼາຍກ່ວາເພດຊາຍ,ກວມໃນກໍາລັງການຜະລິດເຖິງ 69,5% ສ່ວນເພດຊາຍມີພຽງແຕ່ 55,6% ສິ່ງດັ່ງກ່າວເປັນອັນບົ່ງບອກຈະແຈ້ງວ່າການສົ່ງເສີມຈະສາມາດປະກອບສ່ວນໃນການສ້າງຄວາມເຕີບໂຕທາງເສດຖະກິດຂອງຊາດ ໃນເມື່ອມີການເພີ່ມການມີສ່ວນຮ່ວມໃນກິດຈະກໍາການຝຶກອົບຮົມ ຕ່າງໆ.

ຍັງມີຫຼາຍໆຄົນມັກຕະໜັກໃສ່ແຕ່ການເຮັດວຽກຮ່ວມກັບຊາວກະສິກອນ ທີ່ຫົວໜ້າຄອບຄົວເປັນເພດຊາຍ(ຜົວ)ເພື່ອໃຫ້ເຂົາເຈົ້າໄດ້ບອກເລົ່າສູ່ເມັຍ/ລູກຕໍ່ວ່າຄວນເຮັດຫຍັງ/ແນວໃດ. ແຕ່ເມື່ອເບິ່ງແລ້ວເຫັນວ່າຮູບແບບດັ່ງກ່າວບໍ່ມີປະສິດຕິພາບພໍເທົ່າໃດມັນເໝືອນກັບວ່າໄປຊື້ເອົາໄຂ່ໃນ ເວລາທີ່ຕົນເອງຢາກກິນໄກ່. ທຸກແຜນກິດຈະກໍາການສົ່ງເສີມຖ້າຫາກມີເປົ້າໝາຍຢາກບັນລຸຜົນສູງບໍ່ວ່າດ້ານການຝຶກທັກສະໃໝ່, ສາທິດເຕັກໂນໂລຍີໃໝ່ ກໍ່ຕໍ່ເມື່ອຄົນຕ້ອງການສິ່ງນັ້ນໆ ແລະ ຫົວຂໍ້ການຝຶກກໍ່ກ່ຽວຂ້ອງກັບເລື່ອງນັ້ນ ແລະ ມັນກໍ່ເປັນວິທີການຢ່າງດຽວທີ່ຮັບປະກັນໄດ້ການມີປະສິດຕິພາບ .

ແນນອນຢູ່ໃນບາງເຂດ/ແຂວງຂອງປະເທດ, ເພດຍິງບໍ່ກ້າອອກຄໍາຄິດເຫັນ ແລະ ສະແດງອອກໃນກຸ່ມທີ່ມີທັງຍິງແລະຊາຍ, ຕໍ່ບັນຫາດັ່ງກ່າວກໍ່ຄວນຈັດແບ່ງເປັນກຸ່ມສົນທະນາສະເພາະເພດຍິງຕ່າງຫາກ. ແຕ່ກໍ່ມີບາງເຂດ, ບາງພາກ ຜູ້ຍິງແມ່ນສາມາດທຽບທັນກັບເພດຊາຍ.

ອີກຢ່າງນຶ່ງອັດຕາການກືກໜັງສືຂອງເພດຍິງສູງກ່ວາເພດຊາຍ, ຕໍ່ບັນຫາດັ່ງກ່າວພະນັກງານສົ່ງເສີມກໍ່ຄວນໄດ້ນໍາໃຊ້ເຕັກນິກ / ວິທີການຝຶກທີ່ສາມາດເອື້ອອໍານວຍການຮຽນຮູ້ໄດ້ໂດຍບໍ່ຈໍາເປັນຕ້ອງໄດ້ຂຽນ ແລະ ອ່ານ ແຕ່ໃຫ້ໄດ້ມີການສາທິດປະຕິບັດຕົວຈິງໂລດ ຫຼື ໃຫ້ມີການສົນທະນາ, ເພາະລະດັບການສຶກສາບໍ່ແມ່ນສິ່ງທີ່ຈໍາເປັນຕົ້ນຕໍໃດໆ ສໍາລັບການມີອາຊີບເປັນຊາວກະສິກອນດັ່ງນັ້ນກໍ່ຕ້ອງໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມໃນກິດຈະກໍາການສົ່ງເສີມໄດ້.




ໃນ ສປປ ລາວ ກະສິກອນຍິງໄດ້ມີສ່ວນຮ່ວມຫຼາຍໆຢ່າງໃນກິດຈະກຳການສົ່ງເສີມເຊັ່ນໃນພາກເໜືອ,ໄຕ້ແມ່ນມີຫຼາຍຄອບຄົວທີ່ເປັນສາມະຊິກກຸ່ມຮຽນຮູ້ດ້ານການປູກເຂົ້າ, ລ້ຽງໄກ່, ໝູ ແລະ ຍັງມີຜົນງານພົ້ນເດັ່ນ, ຖືກຄັດເລືອກໃຫ້ເປັນວິຊາການບ້ານໄດ້. ດັ່ງນັ້ນຈຶ່ງເວົ້າໄດ້ວ່າການເພີ່ມການ ມີສ່ວນຮ່ວມຂອງເພດຍິງແມ່ນເປັນໄປໄດ້ ແລະ ທັງມີປະໂຫຍດອັນໃຫຍ່ຫຼວງກັບຊຸມຊົນໂດຍລວມອີກດ້ວຍ.

## 7. ຄອບຄົວຕົວແບບ"ມີບົດບາດຫຍັງໃນຮູບແບບການສົ່ງເສີມທີ່ຮອບດ້ານ?

ຊາວກະສິກອນຮຽນຮູ້ຈາກກັນ ແລະ ກັນ, ເພາະສະນັ້ນການທີ່ໄດ້ໃຫ້ຊາວກະສິກອນມີກິດຈະກຳຮ່ວມກັນໃນລະບົບການສົ່ງເສີມແມ່ນເປັນຄວາມຄິດທີ່ດີ ແລະ ມັນກໍ່ມີຫຼາຍວິທີປະຕິບັດ. ນຶ່ງໃນ ນັ້ນກໍ່ແມ່ນການຝຶກອົບຮົມ "ສ້າງຄອບຄົວຕົວແບບ" ຊຶ່ງເປັນວິທີທີ່ລາວໄດ້ເຄີຍນຳໃຊ້ມາແລ້ວ. ເຖິງວ່າວິທີດັ່ງກ່າວຈະບໍ່ມີປະສິດຕິຜົນສະເໝີໄປແຕ່ກໍ່ຖືໄດ້ວ່າເປັນສ່ວນນຶ່ງໃນຮູບແບບການສົ່ງເສີມ. ວິທີການສົ່ງເສີມທີ່ເນັ້ນໃສ່ຫົວໜ່ວຍຄອບຄົວແມ່ນຈະມີມູນຄ່າສູງແລະວິທີການແບບນີ້ຈະເກີດຄວາມເໝາະສົມໄດ້ກໍ່ຕໍ່ເມື່ອຄວາມຮູ້ທີ່ໄດ້ຮັບໄດ້ມີການກະຈ່າຍໄປສູ່ຄອບຄົວອື່ນໃນຊຸມຊົນນັ້ນ.ຢ່າງໃດກໍດີຄອບຄົວຊາວກະສິກອນທີ່ມີມັກຈະຖືກຄັດເລືອກເອົາເປັນຄອບຄົວຕົວແບບ. ມີບາງຄັ້ງກໍ່ມັກຍົກຂໍ້ຄິດເຫັນຂຶ້ນວ່າຄອບຄົວອ່າວມີແດ່ມັກຈະເປັນຜູ້ທ້າວທັນໃນກິດຈະກຳສົ່ງເສີມ, ແນ່ນອນ! ເພາະເຂົາເຈົ້າເລົ່ານັ້ນເປັນຜູ້ຕ້ອງນຳໃຊ້ເຕັກໂນໂລຢີໃໝ່, ແຕ່ກໍ່ມີຫຼາຍໆຄອບ ຄົວທີ່ບໍ່ມີຄວາມຈຳເປັນຕ້ອງໄດ້ຮັບຄຳແນະນຳຈາກພາກລັດແຕ່ຢ່າງໃດໃນການນຳໃຊ້ເຕັກໂນໂລຢີໃໝ່ໆທັງນີ້ກໍ່ເພາະເຂົາເຈົ້າມີຊັບພະຍາກອນພຽງພໍ,ມີລະດັບການສຶກສາ ແລະ ໃກ້ຕະລາດ, ນອກນັ້ນກໍ່ແມ່ນການສະແຫວງຫາຄວາມຮູ້ໃໝ່ເພື່ອປັບປຸງແບບ

ແຜນການຜະລິດ, ຍົກສະມັດຕະ ພາບໂດຍຕົວເຂົາເຈົ້າເອງ. ຈຶ່ງເຫັນວ່າເຂົາເຈົ້າບໍ່ມີຄວາມຈຳເປັນຕ້ອງມີການບໍລິການສົ່ງເສີມພໍເທົ່າໃດຖ້າທຽບໃສ່ຄອບຄົວທຸກຍາກ.

ໃນໄລຍະຜ່ານມາການຝຶກໂດຍມີຂໍ້ສົມມຸດຕິຖານໄວ້ວ່າຖ້າມີຄອບຄົວຕົວແບບແລ້ວການລອກແບບກໍ່ຈະກະຈ່າຍອອກສູ່ວົງກ້ວາງໄດ້ ແຕ່ໃນຕົວຈິງຍຸດທະວິທີນີ້ບໍ່ເປັນຈິງໄດ້ເພາະຊັບພະຍາກອນຄອບຄົວຕົວແບບທີ່ມີແຕກຕ່າງກັບຂອງຄອບຄົວອື່ນ. ຍັງມີການຕັ້ງຂໍ້ສົມມຸດຕິຖານໄວ້ອີກວ່າປະໂຫຍດທີ່ຊາວກະສິກອນຄອບຄົວຮັ່ງໄດ້ກໍ່ຈະມີການກະຈ່າຍລາຍໄດ້ສູ່ຜູ້ທຸກໄດ້ສ່ວນໃດນຶ່ງ. ໄດ້ມີຜົນການປະຕິບັດແລະບົດຮຽນຕົວຈິງໃນໂລກຢ່າງຫຼວງຫຼາຍແລ້ວວ່າມັນເປັນຈິງບໍ່ໄດ້. ແທນທີ່ຈະນຳໃຊ້ຍຸດທະສາດດັ່ງໄດ້ກ່າວນັ້ນຈະເກີດການກະຈ່າຍຜົນປະໂຫຍດຕາມຍຸດທະສາດວາງໄວ້,ກົງກັນຂ້າມຜົນປະໂຫຍດພັດຖືກຮັດກອດຢູ່ກັບພຽງກຸ່ມຄອບຄົວທີ່ມີຊັບພະຍາກອນຫຼາຍກ່ວາ, ໃນທີ່ສຸດຄວາມແຕກໂຕນລະວ່າງຜູ້ທຸກ ແລະ ຮັ່ງ ກໍ່ເພີ່ມຂື້ນເປັນກ້າວໆ.

ມີສອງຢ່າງທີ່ສາມາດປະຕິບັດ ໃຫ້ເປັນຍຸດທະສາດການສ້າງຄອບຄົວຕົວແບບທີ່ເຂົ້າກັບຮູບແບບການສົ່ງເສີມທີ່ຮອບດ້ານນີ້. ຢ່າງທີນຶ່ງແມ່ນການເລືອກຄອບຄົວຕ້ອງເປັນຜູ້ທີ່ເປັນຕົວແທນໄດ້ບໍ່ວ່າໃນຖານະດ້ານສັງຄົມກໍ່ຄືດ້ານເສດຖະກິດຂອງຊຸມຊົນ, ໂດຍສະເພາະເພດຍິງ/ຫຼືຄອບຄົວໃນ ກຸ່ມຊາວກະສິກອນທີ່ດ້ອຍໂອກາດມາກ່ອນນັ້ນ. ຢ່າງທີສອງການຈັດການແລກປ່ຽນບົດຮຽນລະວ່າງຊາວກະສິກອນດ້ວຍກັນເພື່ອໃຫ້ຄວາມຮູ້ທີ່ໄດ້ຮັບຖືກກະຈ່າຍໄປສູ່ຄອບຄົວອ່ນໃນຊຸມຊົນເຊັ່ນ: ຈັດປະຊຸມກຸ່ມ, ຈັດວັນ ລົງຢັ້ງມຢາມສະໜາມ ໃນເນື້ອທີ່ຜະລິດເພື່ອໃຫ້ຄອບຄົວຕົວແບບໄດ້ແລກປ່ຽນບົດຮຽນ ແລະ ປະສົບ ການກັບຄົນອື່ນໆ

## 8. ຈະເປັນການປະຕິເສດຫຼືລະເລີຍຊາວກະສິກອນຜູ້ທີ່ຮັ່ງຫຼືບໍ່?

ບໍ່ແມ່ນແຕ່ນ້ອຍດຽວເລີຍ! ຄອບຄົວຮັ່ງມີ ແລະ ຜະລິດເພື່ອເປັນສິນຄ້າປ້ອນຕະລາດນັ້ນກໍ່ສາມາດເຂົ້າຮ່ວມໃນກຸ່ມການສົ່ງເສີມເໝືອນກັບສາມະຊິກຊຸມຊົນຄົນອື່ນໆ. ເຂົາເຈົ້າສາມາດສ້າງບົດບາດອັນໃຫຍ່ຫຼວງໃນການເຂົ້າຮ່ວມກຸ່ມເພື່ອແລກປ່ຽນສິ່ງທີ່ເຂົ້າສຳນິສຳນານ ເພາະວ່າບາງຄົນແມ່ນມີຄວາມຮູ້ໃນການຜະລິດ/ປະສົບການຕ່າງໆຫຼາຍກ່ວາຄອບຄົວອື່ນໆ ຫຼື ອາດມີຫຼາຍກ່ວາພະນັກງານສົ່ງເສີມເມືອງດ້ວຍຊ້ຳ. ຖ້າຫາກຄອບຄົວທີ່ຮັ່ງມີສາມາດປະກອບສ່ວນເພື່ອສ້າງຜົນປະໂຫຍດຮ່ວມກັນ, ຮ່ວມແກ້ບັນຫາທີ່ມີຄ້າຍຄຽງກັນກໍ່ເປັນການດີ ທີ່ເຂົາເຈົ້າສາມາດສ້າງເປັນກຸ່ມຮຽນຮູ້ສະເພາະຂື້ນ. ກິດຈະກຳຂອງກຸ່ມເຂົາເຈົ້າອາດແຕກຕ່າງຈາກກຸ່ມອື່ນໆ. ຕົວຢ່າງເຂົາເຈົ້າອາດມີຄວາມຕ້ອງການທົດສອບປູກພືດເສດຖະກິດໃໝ່, ວິທີການນຳໃຊ້/ຄຸ້ມຄອງກົນຈັກ ຫຼື ການຜູກພັນກັບພໍ່ຄ້າຊຶ່ງເຂົາເຈົ້າສາມາດດຳເນີນຫຼາຍໆກິດຈະກຳໂດຍຕົວເຂົາເຈົ້າເອງ, ແຕ່ພະນັກງານສົ່ງເສີມເມືອງຕ້ອງສາມາດຫຼີ້ນບົດບາດເຮັດໃຫ້ຂະບວນການນັ້ນໄດ້ເລີ່ມເກີດຂື້ນ .

ແຕ່ມັນຈະເກີດມີຄຳຖາມຢູ່ເຊັ່ນ: ຄອບຄົວຮັ່ງມີຄວນເປັນຜູ້ນຳຂອງກຸ່ມຫຼືບໍ່? ເພາະສາມະຊິກຄົນອື່ນໃນກຸ່ມມີທຶນຮອນນ້ອຍກ່ວາເຂົາເຈົ້າ!.ກໍ່ເປັນການຕອບໄດ້ຍາກບໍ່ນ້ອຍ! ເພາະການຕັດສິນໃຈເລືອກເອົາຫົວໜ້າ/ຜູ້ນຳກຸ່ມແມ່ນຊາວບ້ານເລືອກເອງຫາກບໍ່ແມ່ນພະນັກງານສົ່ງເສີມເມືອງ. ຖ້າມອງໃນກໍລະນີບວກ ກໍ່ເຫັນໄດ້ວ່າຜູ້ທີ່ມີສັດທາ ແລະ ບົດບາດສູງກ່ວາກໍ່ຈະສາມາດຊ່ວຍສາມະຊິກຄົນອື່ນໆໃນກຸ່ມໄດ້ດີກ່ວາໃນດ້ານການເຂົ້າເຖິງປັດໃຈການຜະລິດ ແລະ ການຕະຫຼາດ. ຖ້າມອງອີກໃນນຶ່ງ ຜູ້ມີອຳນາດອາດຈະໝູນໃຊ້ກຸ່ມເພື່ອເປັນເຄື່ອງມືໃນການສ້າງປະໂຫຍດ ຫຼື ຂະຫຍາຍຂອບເຂດການຄວບຄຸມບັນດາຊັບພະຍາກອນລວມຂອງທ້ອງຖິ່ນກໍ່ໄດ້. ສິ່ງທີ່ພະນັກງານສົ່ງເສີມຕ້ອງກຳແໜ້ນກໍ່ຄືກິດຈະກຳຂອງກຸ່ມຕ້ອງສ້າງປະໂຫຍດໃຫ້ສາມະຊິກທຸກຄົນໃນຊຸມຊົນຮວມທັງຜູ້ທຸກຍາກ.

## 9. ພວກເຮົາຈະຈັດຕັ້ງປະຕິບັດຮູບແບບການສົ່ງເສີມທີ່ຮອບດ້ານແນວໃດ?

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດNAFESໄດ້ນຳໃຊ້ຮູບແບບການສົ່ງເສີມ ກ ປ ຂອງລາວໃນທົ່ວປະເທດ. ຮູບແບບດັ່ງກ່າວໄດ້ອອກແບບໃຫ້ມີລັກສະນະຮອບດ້ານສາມາດປະກອບສ່ວນໃນການຜັນຂະຫຍາຍນະໂຍບາຍຂອງລັດຖະບານ ໃຫ້ບັນລຸໄດ້ເປົ້າໝາຍການພັດທະນາເສດຖະກິດ. ຕະຫຼອດໄລຍະການປະຕິບັດນຳໃຊ້ຮູບແບບການສົ່ງເສີມດັ່ງກ່າວນັກສົ່ງເສີມເມືອງ ແລະ ແຂວງ ໄດ້ປະຕິບັດຫຼາຍຂັ້ນຕອນຢ່າງຕໍ່ເນື່ອງເພື່ອໃຫ້ເຫັນໄດ້ການມີປະສິດຕິຜົນ ຂອງລະບົບ-ຮູບແບບດັ່ງກ່າວເຊັ່ນ:

ໃນຊ່ວງການນຳສະເໜີ "ການສ້າງລະບົບຕາໜ່າງການສົ່ງເສີມຂັ້ນບ້ານ", ພະນັກງານສົ່ງເສີມເມືອງຕ້ອງໄດ້ນຳສະເໜີ/ອະທິບາຍຊີ້ໃຫ້ເຫັນວ່າ ສາມະຊິກຊຸມຊົນທຸກຄົນສາມາດເຂົ້າຮ່ວມກິດຈະກຳການສົ່ງເສີມໄດ້ບໍ່ວ່າຜູ້ທຸກແລະຜູ້ຮັ່ງ, ເພດຍິງ ແລະ ເພດຊາຍ. ອຳນາດການປົກຄອງບ້ານເປັນຜູ້ທີ່ສຳຄັນໃນການຊຸກຍູ້ໃຫ້ທຸກຄົນເຂົ້າຮ່ວມ.

ຂັ້ນຕອນຕໍ່ມາ ແມ່ນການຊອກຫາຄວາມຕ້ອງການຝຶກຂອງຊາວບ້ານເປົ້າໝາຍ (TNA), ຊຶ່ງເປັນຂັ້ນຕອນທີ່ເນັ້ນໃສ່ວຽກປັບປຸງເຕັກນິກການປູກ,ລ້ຽງ... ຮວມທັງດ້ານສັງຄົມເພາະຊາວບ້ານບໍ່ໄດ້ມີ ສະຖານະພາບທາງສັງຄົມທີ່ຄືກັນ: ເຂົາເຈົ້າມີຄວາມແຕກຕ່າງທາງຖານະ, ຊັບພະຍາກອນທີ່ມີ ແລະປະສົບການໃນການຜະລິດ. ຄວາມແຕກຕ່າງເລົ່ານັ້ນຕ້ອງກຳນົດແຈ້ງໃນຊ່ວງຫາ TNA ຊຶ່ງໝາຍວ່າກຸ່ມຊາວບ້ານທີ່ແຕກຕ່າງກັນຍ່ອມຕ້ອງການໃນຫົວຂໍ້ ແລະ ລະດັບການຝຶກທີ່ຕ່າງກັນ, ນອກນັ້ນກໍ່ແມ່ນ ການໃຫ້ຄວາມສຳຄັນຕໍ່ບົດບາດຂອງເພດຍິງແລະເພດຊາຍໃນເລື່ອງນັ້ນໆ ໂດຍສາມາດນຳໃຊ້ເຄື່ອງມື ການວິເຄາະອຸປະສັກເຂົ້າຊ່ວຍ.

ການເລືອກເອົາຫົວຂໍ້ໂຄງການຮຽນຮູ້ ແມ່ນຕ້ອງໃຫ້ສາມະຊິກຂອງຊຸມຊົນເປັນຜູ້ເລືອກໂດຍການຮັບຮອງ/ຮັບຮູ້ຈາກອຳນາດການປົກຄອງບ້ານ, ແຕ່ພະນັກງານເມືອງກໍ່ຕ້ອງກະຕຸ້ນໃຫ້ຄວາມຄິດຄວາມເຫັນວ່າກິດຈະກຳ/ຫົວຂໍ້ອັນໃດເປັນປະໂຫຍດກັບຄົນສ່ວນໃຫຍ່ຂອງຊຸມຊົນ. ສິ່ງດັ່ງກ່າວຈະຊ່ວຍໃຫ້ບ້ານໄດ້ຮັບປະໂຫຍດແຕ່ຫົວທີ່ຢູ່ໃນຮອບວຽນການຜະລິດທຳອິດ, ໃນລະດູການຕໍ່ໄປກໍ່ເນັ້ນໃນສິ່ງທີ່ເຂົາເຈົ້າມີຄວາມສົນໃຈເພີ່ມເຕີມດ້ານອື່ນ.

ດັ່ງທີ່ໄດ້ກ່າວມາແລ້ວວ່າການສ້າງຕັ້ງກຸ່ມຜະລິດ ໂດຍໃຫ້ຜ່ານໂຄງການຮຽນຮູ້ສາມາດດຳເນີນໄດ້ຢ່າງຫຼາຍຮູບຫຼາຍສີຂຶ້ນກັບການຕັດສິນໃຈຂອງຊຸມຊົນ ແຕ່ພະນັກງານເມືອງຕ້ອງກະຕຸກ ຊຸກຍູ້ ອຳນາດການປົກຄອງໃຫ້ເຫັນໄດ້ການແກ້ໄຂຊີວິດການເປັນຢູ່ຂອງຄອບຄົວຜູ້ທຸກຍາກໃນບ້ານນັ້ນໆ; ອາດມີການສ້າງກຸ່ມສະເພາະເມື່ອເຂົາເຈົ້າຫາກເຫັນວ່າມີຄວາມຈຳເປັນ.

ໃນຊ່ວງ ດຳເນີນການປະຕິບັດໂຄງການຮຽນຮູ້, ພະນັກງານສົ່ງເສີມເມືອງຕ້ອງມີການກຳນົດວິທີ, ແບ່ງໜ້າທີ່ໃນການເອື້ອອຳນວຍການຮຽນຮູ້ໃຫ້ເໝາະສົມ, ຖ້າຫາກເຮັດໄດ້ແນວນັ້ນການກະຕຸກ ຊຸກຍູ້ໃຫ້ເກີດການສົນທະນາ ແລະ ຮຽນຮູ້ໃຫ້ແກ່ກຸ່ມເພດຍິງ ຫຼື ຊົນເຜົ່າອາດມີຄວາມສະດວກຂຶ້ນ. ຕ້ອງມີການນຳໃຊ້ເຕັກນິກການຝຶກທີ່ເໝາະສົມ,ຫຼາກຫຼາຍວິທີການເຊັ່ນ: ສົນທະນາ ແລກປ່ຽນປະສົບການ, ສາທິດການປະຕິບັດຕົວຈິງ, ສົນທະນາກຸ່ມຍ່ອຍຈະຊ່ວຍສາມະຊິກກຸ່ມຮຽນຮູ້ທຸກຄົນມີຄວາມເຂົ້າໃຈດີ.



ໃນຊ່ວງການຕິດຕາມ-ປະເມີນຜົນການປະຕິບັດກິດຈະກຳ ຈະເປັນການດີຖ້າຫາກມີການແຍກເປັນກຸ່ມຍ່ອຍຕາມເພດ ຫຼື ຄວາມຮັ່ງມີເຊັ່ນ: ແຍກເພດຍິງຕ່າງຫາກເພື່ອປະເມີນໂດຍ ນຳໃຊ້ເຄື່ອງມື SIFT (ສິ່ງທີ່ເຮັດໄດ້ສຳເລັດ, ສິ່ງຕ້ອງສືບຕໍ່ປະຕິບັດ, ສິ່ງເຮັດບໍ່ໄດ້ ແລະ ສິ່ງຕ້ອງໄດ້ຝຶກຕື່ມ). ນອກນັ້ນກໍ່ຕ້ອງຕີລາຄາຜົນໄດ້ຮັບດ້ານລະດັບ/ຂະໜາດ/ເປີເຊັນການປ່ຽນແປງທີ່ຊັດເຈນ ຫາກບໍ່ແມ່ນແບບຕົວເລກ

ສະເລ່ຍຂອງທັງໝົດກຸ່ມ. ເຮັດແນວນີ້ຈະເຫັນໄດ້ວ່າໃຜໄດ້ຮັບປະໂຫຍດຈາກໂຄງການຮຽນຮູ້, ໄດ້ເທົ່າໃດບໍ່ວ່າດ້ານປະລິມານ ແລະ ຄຸນນະພາບ.

## 10. ມີຫຍັງທີ່ເປັນສິ່ງຕ້ອງປະສານລະວ່າງວຽກສົ່ງເສີມ ກັບການຜະລິດແບບສັນຍາຜູກພັນ?

*ການຜະລິດແບບຜູກພັນ (Contract farming)* ແມ່ນຊາວກະສິກອນໄດ້ເຊັນສັນຍາກັບພໍ່ຄ້າ ຫຼື/ແລະ ບໍລິສັດໃດນຶ່ງ, ບົນພື້ນຖານສັນຍາຊາວກະສິກອນຈະໄດ້ຮັບປັດໃຈການຜະລິດຕາມຂໍ້ຜູກພັນ (ເປັນສິນເຊື່ອ)ໂດຍມີກຳນົດໝາຍຄ້ຳປະກັນດ້ານລາຄາເກັບຊື້. ຊາວກະສິກອນຕ້ອງນຳໃຊ້ແນວພັນ ແລະ ເຕັກນິກຕ່າງໆຕາມທີ່ໄດ້ລະບຸໂດຍຜູ້ຊື້ ແລະ ກໍ່ຈະບໍ່ອະນຸຍາດໃຫ້ຂາຍໃຫ້ຄົນ/ບໍລິສັດອື່ນ. ບາງເທື່ອຄູ່ສັນຍາ(ຜູ້ຊື້) ຍັງໄດ້ເຮັດບໍລິການສົ່ງເສີມໃຫ້ຄູ່ສັນຍາ(ຜູ້ຜະລິດ) ເຊັ່ນ: ບໍລິສັດຢາສູບສົ່ງນັກສົ່ງເສີມລົງປູກສ້າງເປັນແປງສາທິດ ແລະ ໃຫ້ຂໍ້ແນະນຳກັບທີ່ດ້ວຍ.

ການຜະລິດແບບສັນຍາຜູກພັນມີທັງຜົນດີ ແລະ ຜົນເສັຍສຳລັບຊາວກະສິກອນທຸກຍາກ. ຜົນດີ ແມ່ນ: ກ.) ຊາວກະສິກອນໄດ້ເຂົ້າເຖິງຕະຫຼາດ ແລະ ການບໍລິການ ແລະ ຂ.) ຜົນປະໂຫຍດດ້ານການເງິນມີການຄ້ຳປະກັນໃນລາຄາຕ່ຳສຸດໄວ້ໃຫ້. ແຕ່ຜົນລົບແມ່ນ: ກ.) ຊາວກະສິກອນ ບໍ່ແມ່ນ ເປັນຜູ້ຕັດສິນໃຈໃນການເລືອກ ແລະ ປຽບເໝືອນໄດ້ເປັນພຽງຜູ້ໃຊ້ແຮງງານໃນເນື້ອທີ່ປູກຂອງຕົນເອງ ,ຂ.) ຊາວກະສິກອນກາຍເປັນລູກໜີ້ປະຈຳ ແລະ ຄ່ອຍໆເກີດມີການໜີບຮັດຜູກຂາດ ທັງໝົດຜົນປະໂຫຍດລວມຈາກການຜະລິດຂອງຄອບຄົວ.

ທີ່ຈິງແລ້ວ ລັດຖະບານ ມີໜ້າທີ່ປົກປ້ອງຜົນປະໂຫຍດ ຂອງຊາວກະສິກອນຜູ້ທຸກຍາກ, ແຕ່ໃນຫຼາຍໆປະເທດພະນັກງານລັດບໍ່ໄດ້ມີສ່ວນຮ່ວມໂດຍກົງໃນການຜູກພັນສັນຍາລະວ່າງຜູ້ຜະລິດ ແລະ ຜູ້ເກັບຊື້, ແຕ່ມີຫຼາຍສິ່ງຢ່າງທີ່ສາມາດເຮັດໄດ້ເພື່ອຊຸກຍູ້ໃຫ້ເກີດຜົນທາງບວກແກ່ການຜະລິດແບບຜູກພັນໃຫ້ຫຼາຍຂຶ້ນເຊັ່ນ:

<u>ໃນລະດັບສູນກາງ:</u> ກຳນົດຂອບເຂດ/ມາດຖານໃນການຜູກພັນສັນຍາເພື່ອຊາວກະສິກອນຈະບໍ່ກາຍເປັນຜູ້ເສັຍປຽບ ແລະ ເປັນຝ່າຍຖືກປັບໃໝ;

<u>ໃນລະດັບລະຫວ່າງສູນກາງ ແລະ ແຂວງ:</u> ຊຸກຍູ້ໃຫ້ເກີດການແຂ່ງຂັນລະວ່າງຜູ້ຊື້, ເພື່ອໃຫ້ຊາວກະສິກອນບໍ່ຖືກຜູກຂາດໂດຍຜູ້ຊື້, ຫຼືບໍລິສັດໃດນຶ່ງເທົ່ານັ້ນ;

<u>ໃນລະດັບລະຫວ່າງແຂວງກັບເມືອງ:</u> ພັດທະນາລະບົບຂໍ້ມູນຂ່າວສານ, ລະບົບການຝຶກ, ທີ່ປຶກສາທີ່ສາມາດ ຊ່ວຍຊາວກະສິກອນໃຫ້ເຂົ້າໃຈເລື່ອງການຕະຫຼາດດີໆ;

<u>ໃນລະດັບລະຫວ່າງເມືອງກັບບ້ານ:</u> ເອື້ອອຳນວຍໃຫ້ເກີດການລວມຕົວເປັນກຸ່ມຜະລິດ/ສາມະຄົມເພື່ອຊາວກະສິກອນຈະໄດ້ມີອຳນາດຕໍ່ລອງຫຼາຍຂຶ້ນ.

ມາດຕາການດັ່ງກ່າວນັ້ນຈະຊ່ວຍຊາວກະສິກອນໂດຍທົ່ວໄປໄດ້ດີພໍສົມຄວນ, ຫາກບໍ່ແມ່ນພຽງແຕ່ສຳລັບຄອບຄົວທີ່ທຸກຍາກເທົ່ານັ້ນ. ພະນັກງານແຂວງ ແລະ ເມືອງເປັນຜູ້ມີບົດບາດສຳຄັນກ່ວາໝູ່ໃນການຊ່ວຍເຫຼືອຊຸມຊົນບໍ່ໃຫ້ມີກຸ່ມຄົນໃດນຶ່ງຖືກປະປ່ອຍໃນຊ່ວງຫັນປ່ຽນການຜະລິດພໍກຸ້ມກິນໄປສູ່ການຜະລິດເປັນສິນຄ້າ. ໃນຊ່ວງການຈັດຕັ້ງກຸ່ມຜະລິດການວິເຄາະຫາໂອກາດທາງດ້ານຕະຫຼາດ ແລະ ການປະສານສົມທົບກັບພໍ່ຄ້າຄວນໄດ້ເອົາໃຈໃສ່ ຕໍ່ບັນຫາການເລືອກຜະລິດສິນຄ້າອັນໃດທີ່ເພດຍິງ ແລະ ຜູ້ທຸກຍາກກໍ່ສາມາດເຮັດນຳໄດ້, ຊຶ່ງອາດເປັນພືດຜັກ, ການລ້ຽງປາ, ລ້ຽງສັດນ້ອຍ ແລະ ເຄື່ອງປ່າຂອງດົງ. ແນ່ນອນສິ່ງທີ່ກ່າວອາດບໍ່ແມ່ນສິ່ງທີ່ບໍລິສັດປຸງແຕ່ງໃຫ້ບຸລິມະສິດ, ແຕ່ແມ່ນເລື່ອງຈິງເໝືອນກັນທີ່ຄວາມສົນໃຈຂອງບໍລິສັດໃຫຍ່ ກໍ່ບໍ່ແມ່ນ ບຸລິມະສິດ ຂອງນັກສົ່ງເສີມລັດ.

## 11. ມີຫຍັງທີ່ສາມາດຊ່ວຍປະຊາຊົນໃນເຂດຫ່າງໄກສອກຫຼີກ?

ມີຄຳຕອບທີ່ງ່າຍໆກໍ່ຄື: ຊາວກະສິກອນ ແລະ ບໍລິການສົ່ງເສີມຕ້ອງຫຍັບເຂົ້າໃກ້ກັນ ແຕ່ໜ້າເສັຍດາຍທີ່ບໍ່ທັນມີຄຳຕອບທີ່ງ່າຍພໍເທົ່າໃດກ່ຽວກັບບັນຫາທີ່ວ່າຈະປະຕິບັດກັນແນວໃດ. ມີນຶ່ງໃນຍຸດທະສາດໄດ້ຖືກນຳໃຊ້ມາແລ້ວເກືອບສິບປີ ໃນ ສປປ ລາວ ນັ້ນກໍ່ຄື "ການຈັດສັນ ຖິ່ນລຳເນົາໃໝ່" ຊຶ່ງເປັນການຍົກຍ້າຍຄົນຫຼາຍໆພັນມາຢູ່ໃກ້ທາງ ແລະ ການບໍລິການຂອງລັດ, ມີບາງຈຳພວກກໍ່ໄດ້ຮັບການປ່ຽນແປງ ແລະ ປະໂຫຍດຈາກຍຸດທະສາດດັ່ງກ່າວ ແຕ່ກໍ່ຍັງມີບາງ ສ່ວນພັດເປັນສິ່ງກີດດັນກັບຊີວິດການເປັນຢູ່ປົກກະຕິບໍ່ນ້ອຍ.

ມີຍຸດທະສາດນຶ່ງທີ່ເປັນທາງອອກທີ່ດີ ກໍ່ຄືການກະຈ່າຍບໍລິການອອກໄປສູ່ຊາວກະສິກອນໃນເຂດຫ່າງໄກແທນທີ່ຈະເອົາປະຊາຊົນເຂົ້າມາຫາການບໍລິການ. ບາງສິ່ງທີ່ສາມາດເຮັດໄດ້ເພື່ອໃຫ້ການບໍລິການໄປເຖິງປະຊາຊົນບັນດາເຜົ່າໃນເຂດຫ່າງໄກສອກຫຼີກມີຄື:

- ປະກອບພະນັກງານທີ່ເປັນຄົນທ້ອງຖິ່ນ ສາມາດເວົ້າພາສາພື້ນບ້ານນັ້ນໆໄດ້;
- ຝຶກພະນັກງານໃຫ້ເກີດມີຄວາມເຄົາລົບຕໍ່ວັດທະນະທຳ ແລະ ພູມປັນຍາຊາວບ້ານ ແລະ ສ້າງທັດ ສະນະໃຫ້ເກີດຄວາມສະມັກໃຈເຮັດວຽກໃນເຂດພູດອຍຫ່າງໄກສອກຫຼີກ;
- ຈັດສັນພະນັກງານລົງປະຈຳຕາມກຸ່ມບ້ານ/ເຂດ ແທນທີ່ຈະໄຊ້ເວລາສ່ວນໃຫຍ່ຢູ່ກັບຫ້ອງການສົ່ງເສີມ ກ ປ ເມືອງ( DAFEO);
- ມີການຈັດສັນເບັ້ຍລ້ຽງໃຫ້ແກ່ພະນັກງານໃນການລົງເຮັດວຽກຢູ່ໃນບ້ານເຂດຫ່າງໄກ;
- ດຳເນີນການຢັ້ງມຢາມຖອດຖອນບົດຮຽນກັບພະນັກງານກ່ຽວຂ້ອງຂອງຂະແໜງການ, ແລະ ກົມ, ກອງອື່ນໆ.



ຍຸດທະສາດຢ່າງທີສາມແມ່ນການສ້າງຄວາມເຂັ້ມແຂງແກ່ອົງກອນໃນທ້ອງຖິ່ນ, ຊຶ່ງກ່ຽວຂ້ອງກັບການໃຫ້ລະດັບການສຶກສາແກ່ຊາວບ້ານເພື່ອເຂົາເຈົ້າຈະສາມາດຈັດຕັ້ງກິດຈະກໍາການພັດທະນາ ໂດຍເຂົາເຈົ້າເອງເພື່ອເຂົ້າເຖິງການບໍລິການທີ່ມີຢູ່ໄດ້ດີຂື້ນ. ການເສີມສ້າງຂີດຄວາມສາມາດຂອງທ້ອງຖິ່ນແມ່ນສ່ວນສໍາຄັນອັນນຶ່ງຂອງຮູບແບບການສົ່ງເສີມຂອງລາວ(LEA) ເພາະວ່າອົງປະກອບສໍາຄັນຂອງມັນແມ່ນການສ້າງວິຊາການບ້ານ(VEW) ຊຶ່ງຈະເປັນຕົວແທນໃນແຕ່ລະກຸ່ມບ້ານທີ່ສາມາດດໍາເນີນກອງປະຊຸມແລກປ່ຽນດ້ານວິຊາການນໍາກັນໄດ້ສະດວກ ຮວມທັງມີການປະສານກັບພະນັກງານສົ່ງເສີມເມືອງອີກດ້ວຍ. ການພັດທະນາຕານ່າງສໍາພັນລະວ່າງວິຊາການບ້ານມີຄວາມຈໍາເປັນທີ່ຕ້ອງມີລະບົບການຝຶກ, ການຕິດຕາມ ຊຸກຍູ້ຢ່າງຕໍ່ເນື່ອງ, ຂະນະໃດທີ່ຕານ່າງເລົ່ານັ້ນເຄື່ອນໄຫວດ້ວຍຕົວມັນເອງໄດ້ ພະນັກງານກໍ່ສາມາດລົດພາລະແບກຫາບລົງໄດ້ໃນການລົງຕິດຕາມ.

ແນ່ນອນທັງໝົດທຸກຍຸດທະສາດສາມາດປະສົມປະສານກັນໄດ້,ແລະລະບົບການໃຫ້ບໍລິການທີ່ມີປະສິດຕິພາບສໍາລັບຊາວກະສິກອນໃນເຂດຫ່າງໄກເຫັນວ່າການກະຈ່າຍອອກໄປຫາເຂົາເຈົ້າ ແລະ ການເສີມສ້າງຂີດຄວາມສາມາດແມ່ນເປັນອັນກົກ.

## 12. ການສົ່ງເສີມຈະສະໜັບສະໜູນການຫັນປ່ຽນການຜະລິດແບບພໍກຸ້ມກິນ ໄປສູ່ການຜະລິດສິນຄ້າໄດ້ແນວໃດ?

ພະນັກງານສົ່ງເສີມຕ້ອງໄດ້ເຂົ້າໃຈແຈ້ງວ່າການຫັນປ່ຽນການຜະລິດທີ່ພໍກຸ້ມກິນໄປເປັນສິນຄ້າ ແມ່ນຂະບວນການທີ່ຍາວນານພໍສົມຄວນ. ການຜະລິດທີ່ເນັ້ນໃສ່ຕອບສະໜອງຕະຫຼາດໃນຫຼາຍປະເທດ

ໄດ້ຖືກພັດທະນາໃນຊ່ວງຫຼາຍໆປີ ແລະ ລັດຖະບານຂອງບັນດາປະເທດເລົ່ານັ້ນໃຫ້ຄວາມສຳຄັນຕໍ່ບົດບາດໃນການສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ລະບົບການຜະລິດເພື່ອສະໜອງຕະຫຼາດຮວມທັງມາດຕາການປ້ອງກັນກຸ່ມຄົນທີ່ດ້ອຍໂອກາດໃນລະບົບດັ່ງກ່າວ, ແຕ່ບໍ່ແມ່ນເປັນຜູ້/ຝ່າຍວາງແຜນ ແລະ ບໍລິຫານຄຸ້ມຄອງລະບົບໂດຍກົງ.

ບົດບາດໜ້າທີ່ຂອງພະນັກງານໃນລະບົບການຜະລິດດັ່ງກ່າວ ແມ່ນການຊ່ວຍໃຫ້ປະຊາຊົນໃນການເລືອກ-ຕັດສິນໃຈແທນທີ່ຈະເປັນຜູ້ບອກວ່າເຂົາຕ້ອງເຮັດຫຍັງ. ແຕ່ມັນຕ້ອງການຫັນປ່ຽນທັດສະນະຈາກການເຫັນພຽງວິທີການຜະລິດໄລຍະໃກ້ສະເພາະໜ້າ, ແຕ່ຕ້ອງເນັ້ນໃສ່ການພັດທະນາຄົນໃນໄລຍະຍາວ. ສິ່ງທີ່ນັກສົ່ງເສີມຕ້ອງໄດ້ໃຫ້ຄວາມສຳຄັນນັ້ນມີຄື:

<u>ການຄ້ຳປະກັນສະບຽງ:</u>
ເວລາໃດທີ່ຊາວບ້ານເລີ່ມການຜະລິດເປັນສິນຄ້າປ້ອນຕະຫຼາດ ບໍ່ໄດ້ໝາຍວ່າເຂົາເຈົ້າຢຸດການຜະລິດເພື່ອບໍລິໂພກຂອງຄອບຄົວ, ການປະສົມປະສານທັງສອງຢ່າງແມ່ນໄດ້ມີການດຳເນີນມາແລ້ວໃນຫຼາຍໆປະເທດທີ່ເນັ້ນການຜະລິດເປັນສິນຄ້າ. ນັກສົ່ງເສີມບໍ່ຄວນຄາດຫັວງວ່າ ຕ້ອງໃຫ້ສິນຄ້າອັນໃໝ່ປ່ຽນແທນສິ່ງທີ່ຊາວບ້ານເຄີຍຜະລິດມາກ່ອນເຊັ່ນພືດສະບຽງ ແລະ ສັດ ລ້ຽງຄອບຄົວ ຢ່າງຊິ້ນເຊີງ.

<u>ຄວາມຫຼາກຫຼາຍ</u>. ຕະຫຼາດປ່ຽນແປງໄປຕະລອດ, ຊາວກະສິກອນຜູ້ຜະລິດເປັນສິນຄ້າທີ່ຫຼາກຫຼາຍແມ່ນມີຄວາມສ່ຽງດ້ານຕະຫຼາດນ້ອຍກ່ວາຕໍ່ການຂຶ້ນລົງຂອງອຸປະສົງ ແລະ ລາຄາ. ເຂົາເຈົ້າຈະຢືນໃນທ່າໄດ້ປຽບເພື່ອສະໜອງຕອບຕໍ່ໂອກາດອັນໃໝ່ໆ ເພາະສະນັ້ນກະຊວງກະສິກຳ ແລະປ່າໄມ້ລາວຈິ່ງສະໜັບສະໜູນການຜະລິດທີ່ມີຄວາມຫຼາກຫຼາຍດັ່ງໄດ້ລະບຸໃນ "ວິໄສທັດໃນການພັດທະນາຂະແໜງການ ກ ປ ".

<u>ໃຫ້ຄວາມຮູ້ໃນສິ່ງໃໝ່</u>. ຜ່ານມາການສົ່ງເສີມມັກເນັ້ນໃສ່ການໃຫ້ຂໍ້ມູນທາງດ້ານວິຊາການ ແຕ່ໃນການຜະລິດທີ່ເນັ້ນໃສ່ເປັນສິນຄ້າຊາວບ້ານຕ້ອງການຄວາມຮູ້/ສາມາດອັນໃໝ່ຕື່ມເຊັ່ນ: ຂໍ້ມູນດ້ານຕະຫຼາດ ແລະ ລາຄາ, ຄວາມສຳນານໃນການຄິດໄລ່ຕົ້ນທຶນ ແລະ ກຳໄລທີ່ຫຼາກຫຼາຍວິທີ, ການແປຮູບຜະລິດຕະພັນເພື່ອຍົກມູນຄ່າສິນຄ້າຂຶ້ນ..

<u>ການເຊື່ອມເຂົ້າລະບົບສິນເຊື່ອ</u>. ນື່ງໃນວິໄສທັດ ກະຊວງ ກ ປ ໄດ້ໃຫ້ຄວາມສຳຄັນໃນການ "ພັດທະນາຂະແໜງການຜະລິດ ກ ປ ຈາກ ພໍກຸ້ມກິນໄປສູ່ການຜະລິດເປັນສິນຄ້ານັ້ນຕ້ອງເນັ້ນການສ້າງລະບົບການເງິນຈຸລະພາກໄປຄຽງຄູ່ກັນຈຶ່ງຈະເປັນຕົວຊ່ວຍໜູນການປ່ຽນແປງດັ່ງກ່າວໄດ້" ດ້ວຍເຫດຜົນດັ່ງກ່າວໂຄງການຕ່າງໆ ຈື່ງປະກອບມີທັງວຽກສົ່ງເສີມ ແລະ ການເງິນ ຈຸລະພາກ. ການສ້າງກຸ່ມຜະລິດແມ່ນສ່ວນສຳຄັນນື່ງໃນລະບົບການສົ່ງເສີມຂອງລາວ, ຊື່ງສາມາດສ້າງກິດຈະກຳອອມຊັບ ແລະ ສິນເຊື່ອໄດ້ ສຳລັບສາມະຊິກທຸກຄົນຂອງກຸ່ມ.